Children are our future

Sharon International School

P.O.BOX 4951 / Saphantong Village, Sisattanak District, Vientiane Lao P.D.R.
KG: +856 (0)30 515 0937 / 30-523-2224; P&MS: +856 (0)21-353 275 / 021 316 357

# <u>ແຈ້ງການ</u>

ເຖິງ: ທ່ານຜູ້ປົກຄອງນັກຮຽນ ພາກພາສາລາວທີ່ເຄົາລົບ ແລະ ນັບຖືທຸກທ່ານ.

ເລື່ອງ: ການເລື່ອນຊັ້ນ ແລະ ການສອບເສັງ .

- ອີງຕາມໜັງສືແຈ້ງການຂອງກະຊວງສຶກສາທິການແລະກິລາ ສະບັບເລກທີ 1554/ຫກ, ລົງວັນທີ 11 ພຶດສະພາ 2021
- ອີງຕາມການປະຊຸມຂອງວິຊາການຫຼັກສູດພາກພາສາລາວປະຈຳໂຮງຮຽນ ນານາຊາດ ຊາຣອນ ໃນວັນທີ24/5/2021

ໂຮງຮຽນ ນານາຊາດ ຊາຣອນຂໍຖືເປັນກຽດແຈ້ງມາຍັງ ທ່ານຜູ້ປົກຄອງຊາບດັ່ງນີ້:

1. **<u>ການເລື່ອນຊັ້ນ</u>.**
   - ອີງຕາມຄຳແນະນຳຂອງກະຊວງສຶກສາທິການແລະກິລາ
     - **ຂໍ້ທີ2.2** ສຳລັບນ້ອງນັກຮຽນທີ່ເລື່ອນຊັ້ນຊັ້ນປະຖົມແລະມັດທະຍົມຕອນຕົ້ນໂດຍສະເພາະຫ້ອງຮຽນຊັ້ນປະຖົມ ປ1, 2, 3, 4. ມ1ແລະມ3 ຈະບໍ່ມີການສອບເສັງພາກຮຽນII; ການເລື່ອນຊັ້ນຈະສະຫຼຸບເອົາຄະແນນພາກຮຽນI ແລະຄະແນນສອບເສັງປະຈຳເດືອນຂອງພາກຮຽນທີII ມາສະເລ່ຍເປັນຄະແນະປະຈຳປີ, ຖ້າຜົນສະເລ່ຍແຕ່ລະວິຊາໄດ້5ຂຶ້ນໄປກໍຈະໄດ້ເລື່ອນຊັ້ນ, ແຕ່ຖ້າບໍ່ຜ່ານວິຊາໃດກໍຈະໄດ້ບຳລຸງແລະສອບເສັງຄືນເປັນລາຍບຸກຄົນ.
   - **ເມື່ອບໍ່ມີການສອບເສັງພາກຮຽນ II ຄູກໍ່ຈະສອນທວນຄືນອອນລາຍ ເຖິງວັນພະຫັດ ວັນທີ27/ 5/ 2021 ພາຍໃນອາທິດນີ້ເທົ່ານັ້ນ, "ສຳລັບຫ້ອງຮຽນຊັ້ນປະຖົມ ປ1, 2, 3, 4 ແລະ ຫ້ອງຮຽນຊັ້ນມັດທະຍົມຕົ້ນ ມ1 ແລະ ມ3"**
   - ຜູ້ປົກຄອງສາມາດມາຮັບຜົນການຮຽນຢູ່ຫ້ອງການໂຮງຮຽນຂອງພວກເຮົາພ້ອມກັບ ໃບຄະແນນພາກພາສາອັງກິດໄດ້ໃນວັນອັງຄານ- ວັນພະຫັດ ວັນທີ8-10/ 6/ 2021.
2. **<u>ການສອບເສັງຈົບຊັ້ນປະຖົມປີທີ 5</u>**
   - ອີງຕາມຄຳແນະນຳຂອງກະຊວງສຶກສາທິການແລະກິລາ
     - **ຂໍ້ທີ3.6 /1** ຊັ້ນປະຖົມສຶກສາປີທີ 5 ຈະໄດ້ຈັດຕັ້ງສອບເສັງ **ວັນທີ 28 ມິຖຸນາ - 2 ກໍລະກົດ /2021.**

- ເນື່ອງຈາກວ່າການຮຽນ - ການສອບຍັງບໍ່ເປັນປົກກະຕິ, ສະນັ້ນຄູປະຈຳຫ້ອງຮຽນຊັ້ນປ5 ຍັງຈະສືບຕໍ່ນຳພານັກຮຽນຄົ້ນຄ້ວາບົດຮຽນ ຜ່ານທາງອອນລາຍຄືເກົ່າໂດຍຄູຈະສ້າງແຜນການທວນຄືນໃຫ້ ແຕ່ວັນຈັນ ວັນທີ31 ພຶດສະພາ - ວັນສຸກ ວັນທີ25 ມິຖຸນາ, 2021.
- ການທວນຄືນຈະກຳນົດເອົາ 3ວັນ/ ອາທິດ (ວັນຈັນ, ວັນພຸດ ແລະ ວັນສຸກ) ມື້ລະ2ຊົ່ວໂມງ ເລີ່ມແຕ່ 9:00 - 11:00ໂມງຕອນທ່ຽງ. ເນື່ອງຈາກວ່ານັກຮຽນກໍໄດ້ຄົ້ນຄ້ວາມາເປັນເວລາເກືອບ1ເດືອນ ແລະຫຼັກສູດພາສາອັງກິດກໍສິ້ນສຸດການຮຽນ-ການສອບແລ້ວຈຶ່ງປ່ຽນເວລາຮຽນເປັນພາກເຊົ້າ.



E-mail: sharon_international@yahoo.com
Website: www.sislao.com
Facebook: SharonInternationalSchool2004